# ກອງປະຊຸມເຜີຍແຜ່-ເຊື່ອມຊຶມ ວຽກງານການເປັນປະທານອາຊຽນ ແລະ ອາຊຽນ+3 ຂອງ ສປປ ລາວ ຂະແໜງການເງິນ-ທະນາຄານ ໃນປີ 2024



ໃນວັນທີ 02 ກຸມພາ 2024, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ), ໄດ້ຈັດກອງປະຊຸມເຜີຍແຜ່-ເຊື່ອມຊຶມ ວຽກງານການເປັນປະທານອາຊຽນ ແລະ ອາຊຽນ+3 ຂອງ ສປປ ລາວ ຂຶ້ນ ໂດຍການເປັນປະທານຂອງທ່ານ ນ. ແພງສີ ແພງເມືອງ ຫົວໜ້າກົມຮ່ວມມືສາກົນ ທຫລ, ມີບັນດາຄະນະກົມ, ຄະນະພະແນກ ແລະ ວິຊາການພາຍໃນ ທຫລ ເຂົ້າຮ່ວມຈຳນວນ 60 ທ່ານ.

ຈຸດປະສົງຂອງກອງປະຊຸມເຜີຍແຜ່-ເຊື່ອມຊຶມ ວຽກງານການເປັນປະທານອາຊຽນ ແລະ ອາຊຽນ+3 ຂອງ ສປປ ລາວ ຂະແໜງການເງິນ-ທະນາຄານ ໃນປີ 2024 ໃນຄັ້ງນີ້, ແມ່ນເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈໃຫ້ແກ່ພະນັກງານພາຍໃນ ທຫລ ກ່ຳໄດ້ສະພາບກ່ຽວກັບຂະບວນການກະກຽມການເປັນປະທານ ແລະ ເຈົ້າພາບກອງປະຊຸມຂະແໜງການເງິນ-ທະນາຄານ ໃນພາກພື້ນອາຊຽນ ແລະ ອາຊຽນ+3 ໃນກອງປະຊຸມລະດັບສູງ-ຂັ້ນໜ່ວຍງານ; ລວມທັງແຜນວຽກບູລິມະສິດຂອງປະທານອາຊຽນ (Priority Economic Deliverables: PED) 2024 ທີ່ຕິດພັນກັບຂະແໜງການທະນາຄານ; ແລະ ທິດທາງການເຄື່ອນໄຫວຂອງອາຊຽນໃນປະຈຸບັນ ແລະ ແຜນຕໍ່ໜ້າພາຍຫຼັງສຳເລັດກອງປະຊຸມ.

ສໍາລັບຂະແໜງການເງິນ-ການທະນາຄານ, ທຫລ ໄດ້ຈັດຕັ້ງຜັນຂະຫຍາຍວຽກງານກະກຽມເຈົ້າພາບອາຊຽນ ແລະ ອາຊຽນ+3 ໂດຍການແຕ່ງຕັ້ງຄະນະຮັບຜິດຊອບ 6 ຄະນະ ໃນການກໍານົດໜ້າວຽກໃນແຕ່ລະດ້ານເພື່ອກຽມຄວາມພ້ອມຮອບດ້ານໃນການເປັນເຈົ້າພາບກອງປະຊຸມອາຊຽນ 2024 ໃນນັ້ນ, ທຫລ ແລະ ກະຊວງການເງິນໄດ້ສາເລັດການຈັດກອງປະຊຸມໜ່ວຍງານຊື້-ຂາຍເງິນຕາຕ່າງປະເທດລ່ວງໜ້າຂອງອາຊຽນ ຄັ້ງທີ່ 4 ແລະ ກອງປະຊຸມລະດັບໜ່ວຍງານວຽກງານຂະແໜງການເງິນ-ການທະນາຄານອາຊຽນ+3 ຢູ່ຫຼວງພະບາງ ລະຫວ່າງວັນທີ່ 24-26 ມັງກອນ 2024.




ກອງປະຊຸມດັ່ງກ່າວແມ່ນໄດ້ດາເນີນໄປເປັນເວລາເຄິ່ງວັນ ດ້ວຍບັນຍາກາດອັນຟົດຟື້ນ ຜູ້ເຂົ້າຮ່ວມປະກອບຄໍາຄິດເຫັນເອົາໃຈໃສ່ຕິດຕາມຄົ້ນຄວ້າ ຊຶ່ງໄດ້ຜົນສໍາເລັດຕາມລະດັບຄາດໝາຍທີ່ວາງໄວ້.

**ຂ່າວ-ພາບ : ສົມພິດ ທໍາມະວົງ**

*ຢູ່ເມືອງລາວ ໃຊ້ເງິນກີບລາວ*